ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 568 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22 / 09 / 25

# ດຳລັດ

## ວ່າດ້ວຍ ການປ່ຽນຊື່ເອີ້ນຕຳແໜ່ງຜູ້ບໍລິຫານສະຖານການສຶກສາຊັ້ນສູງ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 69/ສພຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ ສິງຫາ 2025 ສະບັບເລກທີ 12/ລບ, ລົງວັນທີ 8 ກັນຍາ 2025;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1681/ສສກ, ລົງວັນທີ 29 ສິງຫາ 2025.

ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1: ເຫັນດີ ປ່ຽນຊື່ເອີ້ນຕຳແໜ່ງຜູ້ບໍລິຫານສະຖານການສຶກສາຊັ້ນສູງ ດັ່ງນີ້:

1. ມະຫາວິທະຍາໄລ ລະດັບຊາດ
   1) ອະທິການບໍດີມະຫາວິທະຍາໄລແຫ່ງຊາດ ປ່ຽນເປັນ ຜູ້ອຳນວຍການໃຫຍ່ມະຫາວິທະຍາໄລ ແຫ່ງຊາດ, ພາສາອັງກິດຂຽນວ່າ: President of the University;
   2) ຄະນະບໍດີ ປ່ຽນເປັນ ຫົວໜ້າຄະນະວິຊາ, ພາສາອັງກິດຂຽນວ່າ: Dean of the Faculty.
2. ມະຫາວິທະຍາໄລ ລະດັບອື່ນໆ ຫຼື ມະຫາວິທະຍາໄລທ້ອງຖິ່ນ
   1) ອະທິການບໍດີມະຫາວິທະຍາໄລ ປ່ຽນເປັນ ຜູ້ອຳນວຍການມະຫາວິທະຍາໄລ, ພາສາອັງກິດ ຂຽນວ່າ Rector of the University;
   2) ຄະນະບໍດີ ປ່ຽນເປັນ ຫົວໜ້າຄະນະວິຊາ ແລະ ພາສາອັງກິດຂຽນວ່າ: Dean of the Faculty.

ມາດຕາ 2: ບັນດາ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກນິຕິກຳ ແລະ ເອກະສານຕ່າງໆ ທີ່ໄດ້ປະກາດໃຊ້ໃນກ່ອນໜ້ານີ້ ທີ່ຂັດກັບດຳລັດສະບັບນີ້ ລ້ວນຖືກລົບລ້າງ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ